ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2102 - ...

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ເລກທີ /ຫກ

ນະຄອນຫຼວງວຽງຈັນ, ວັນທີ 19 ພຶດສະພາ 2026

## ໜັງສືແຈ້ງເຊີນປະມູນ ສົມທຽບລາຄາ

1. ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານ ການສຶກສາ ແລະ ກິລາ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມ ເຂົ້າຍື່ນຊອງປະມູນສໍາລັບການຈັດຊື້ ອຸປະກອນປັບປຸງລະບົບເຄືອຂ່າຍ ໄລຍະເວລາການຈັດສົ່ງພາຍໃນ 30 ວັນ ພາຍຫຼັງທີ່ເຊັນສັນຍາ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ເຂົ້າເບິ່ງເອກະສານປະມູນທີ່ ອາຄານສູນໄອຊີທີ, ຫ້ອງ 205 ໂທລະສັບ/ແຟັກ: 020 99932694, 020 76651999 ຕາມວັນເວລາ ລັດຖະການ;
4. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ຜູ້ທີ່ສົນໃຈປະມູນ ສາມາດຍື່ນ ໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ທີ່ ສູນໄອຊີທີ, ຖະໜົນລ້ານຊ້າງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທລະສັບ/ແຟັກ: 020 99932694, 020 76651999, ເລີ່ມແຕ່ວັນທີ 21/05/2026 ຫາ 05/06/2026 ຕາມວັນເວລາລັດຖະການ;
5. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ 203 ອາຄານສູນໄອຊີທີ ກ່ອນເວລາ 09:00 ໂມງ ຂອງ ວັນທີ 09/06/2026. ຈະບໍ່ອະນຸຍາດສົ່ງຊອງປະມູນມາທາງເອເລັກໂຕຼນິກ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຮັບເອກສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນທີ 09/06/2026. ໂດຍຊອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ;
6. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ.

ຫົວໜ້າຫ້ອງການ

ກະຊວງສຶກສາທິການ ... ຫ້ອງການ

ຮສ. ປອ. ຫຼ້າວັນ ວົງຄໍາຊາຍ